ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກອງທຶນຫຼຸດຜ່ອນຄວາມທຸກຍາກ

ເລກທີ 0010/ທລຍ

ນະຄອນຫຼວງວຽງຈັນ, ວັນທີ 22 JAN 2025

# ບົດລາຍງານ

**ຮຽນ: ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ທີ່ເຄົາລົບ ແລະ ນັບຖື.**

**ເລື່ອງ: ລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2024 ແລະ ທິດທາງແຜນການ ປີ 2025 ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ.**

– ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ສະບັບເລກທີ 2723/ກປ, ລົງວັນທີ 27 ພຶດສະພາ 2022.

## ພາກທີ I
## ສະຫຼຸບການຈັດຕັ້ງປະຕິບັດ ວຽກງານ ປີ 2024

### 1. ສະພາບລວມ

ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ເປັນຫົວໜ່ວຍວິຊາການລະດັບ 2 ຂອງກະຊວງກະສິກຳ ແລະ ປ່າໄມ້, ຢູ່ພາຍໃຕ້ການຊີ້ນຳ ແລະ ຄຸ້ມຄອງ ຂອງສະພາບໍລິຫານກອງທຶນຫຼຸດຜ່ອນຄວາມທຸກຍາກ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະມົນຕີ ແລະ ສະພາບໍລິຫານ ໃນການຈັດຕັ້ງປະຕິບັດບັນດາໂຄງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງລັດຖະບານ ໃນຂອບເຂດທົ່ວປະເທດ ຕາມແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກໃນແຕ່ລະໄລຍະ.

ໃນປີ 2024, ທລຍ ໄດ້ຈັດຕັ້ງປະຕິບັດໂຄງການທີ່ຕິດພັນກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢູ່ 02 ໂຄງການ ຄື: (1) ໂຄງການ ທລຍ 3 ໄລຍະເພີ່ມທຶນ ຢູ່ 468 ບ້ານເປົ້າໝາຍ ໃນ 12 ເມືອງທຸກຍາກ ຂອງ 04 ແຂວງ (ຜົ້ງສາລີ, ອຸດົມໄຊ, ຫົວພັນ, ຊຽງຂວາງ) ເຊິ່ງເລີ່ມແຕ່ປີ 2020 - 2024 ໂດຍໄດ້ສິ້ນສຸດໂຄງການ ໃນເດືອນມິຖຸນາ ປີ 2024; ແລະ (2) ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ຢູ່ 14 ເມືອງທຸກຍາກ ຂອງ 07 ແຂວງເປົ້າໝາຍ (ຜົ້ງສາລີ, ອຸດົມໄຊ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ, ເຊກອງ) ເຊິ່ງໄດ້ເລີ່ມຈັດຕັ້ງປະຕິບັດນັບແຕ່ຕົ້ນປີ 2024 ແລະ ຈະສິ້ນສຸດໃນປີ 2027.

### 2. ຕີລາຄາການຈັດຕັ້ງປະຕິບັດວຽກງານ

#### 2.1 ວຽກທີ່ພົ້ນເດັ່ນ

- ສຳເລັດການຈັດຕັ້ງປະຕິບັດກິດຈະກຳຕ່າງໆ ຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ ຢູ່ບ້ານເປົ້າໝາຍຊຸດທີ 2 ຈຳນວນ 237 ບ້ານ. ພ້ອມທັງ ໄດ້ຈັດກອງປະຊຸມລາຍງານຜົນສຳເລັດຂອງໂຄງການ ແລະ ກ່າວປິດໂຄງການ ທລຍ 3 ໄລຍະເພີ່ມທຶນ ຢ່າງເປັນທາງການ ໃນວັນທີ 25 ມິຖຸນາ 2024.
- ສຳເລັດບົດລາຍງານ (1) ຜົນສຳເລັດການ ຈັດຕັ້ງປະຕິບັດໂຄງການ ທລຍ 3 ໄລຍະເພີ່ມທຶນ ແລະ (2) ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານ ແຕ່ປີ 2021-2025 ແລະ ແຜນພັດທະນາ 5 ປີ (2026-2030) ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ.

- ສຳເລັດບົດລາຍງານ (1) ຜົນສຳເລັດການ ຈັດຕັ້ງປະຕິບັດໂຄງການ ທລຍ 3 ໄລຍະເພີ່ມທຶນ ແລະ (2) ບົດສະຫຼຸບ ຕີລາຄາການຈັດຕັ້ງປະຕິບັດວຽກງານ ແຕ່ປີ 2021-2025 ແລະ ແຜນພັດທະນາ 5 ປີ (2026-2030) ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ.
- ເລີ່ມຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ຢູ່ 450 ບ້ານ ໃນ 14 ເມືອງທຸກຍາກ ຂອງ 07 ແຂວງເປົ້າໝາຍ.
- ສຳເລັດການສະເໜີໃຫ້ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງຮັບຮອງບັນດາບ້ານເປົ້າໝາຍທັງໝົດ 450 ບ້ານ ຂອງ 14 ເມືອງ ໃນ 07 ແຂວງເປົ້າໝາຍ ຂອງໂຄງການ ປຊກ.
- ສຳເລັດການເຮັດວຽກຮ່ວມກັບ ຄະນະຊ່ຽວຊານທະນາຄານໂລກ ໃນການມາຊຸກຍູ້ ຕິດຕາມ ການຈັດຕັ້ງປະຕິບັດ (1) ໂຄງການ ທລຍ 3 ໄລຍະເພີ່ມທຶນ ຄັ້ງສຸດທ້າຍ ແລະ (2) ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຈຳນວນ 04 ຄັ້ງ. ພ້ອມທັງ, ສຳເລັດບົດລາຍງານສິ້ນສຸດການຈັດຕັ້ງປະຕິບັດວຽກງານ (ICR) ຂອງໂຄງການ ທລຍ 3 ແລະ ທລຍ 3 ໄລຍະເພີ່ມທຶນ.
- ສຳເລັດການເຮັດວຽກຮ່ວມກັບກົມກວດກາ ທີ່ລົງມາຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ, ກະຊວງກະສິກຳ ແລະ ປ່າໄມ້ ຈຳນວນ 02 ຄັ້ງ.
- ສຳເລັດການຈັດກອງປະຊຸມເຜີຍແຜ່ແນະນຳຂອບວຽກຂອງໂຄງການ ປຊກ ຢູ່ (1) ຂັ້ນສູນກາງ; (2) ຂັ້ນເມືອງ 14 ເມືອງ; ແລະ (3) ຂັ້ນບ້ານ 232 ບ້ານ, ຕາມເຂດພື້ນທີ່ເປົ້າໝາຍຂອງໂຄງການ ທັງໝົດ 07 ແຂວງ.
- ສຳເລັດຄູ່ມືການຈັດຕັ້ງປະຕິບັດໂຄງການ ປຊກ (PIM) ສະບັບພາສາລາວ ແລະ ປັບປຸງບັນດາຄູ່ມືແນະນຳດ້ານວິຊາການ ຂອງແຕ່ລະວຽກງານ ເພື່ອເປັນບ່ອນອີງໃຫ້ພະນັກງານໃນການຈັດຕັ້ງປະຕິບັດໂຄງການ ປຊກ.
- ສຳເລັດການເຮັດວຽກຮ່ວມກັບຊ່ຽວຊານທະນາຄານໂລກ ຮ່າງ ແຜນລະດົມທຶນ ສຳລັບວຽກງານແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ໃນເຂດຫ່າງໄກສອກຫຼີກ ຂອງ ສປປ ລາວ ສຳລັບປີ 2026-2035.
- ສຳເລັດຈັດກອງປະຊຸມສະພາບໍລິຫານໂຄງການ ປຊກ ຄັ້ງທີ I ໃນວັນທີ 10 ມັງກອນ 2025, ທີ່ເມືອງສາລະວັນ, ແຂວງສາລະວັນ.
- ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໃນການກະກຽມ ຕ້ອນຮັບຄະນະຕົວແທນຈາກປະເທດປາປົວນິວກີນີ ທີ່ຈະມາຢ້ຽມຢາມ ໃນຕົ້ນເດືອນກຸມພາ 2025.

## 2.2 ການຈັດຕັ້ງປະຕິບັດໂຄງການ

### 2.2.1 ການຈັດຕັ້ງປະຕິບັດ ໂຄງການ ທລຍ 3 ໄລຍະເພີ່ມທຶນ

ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ໂຄງການ ທລຍ 3 ໄລຍະເພີ່ມທຶນ ໃນປີ 2024 ມີດັ່ງລຸມນີ້:

**ວຽກປັບປຸງພື້ນຖານໂຄງລ່າງຂອງຊຸມຊົນ**

- ສຳເລັດການສ້ອມແປງ ແລະ ກໍ່ສ້າງ ພື້ນຖານໂຄງລ່າງ ເພື່ອສົ່ງເສີມວຽກງານກະສິກຳ ແລະ ໂພຊະນາການ ທັງໝົດ 289 ກິດຈະກຳ ເປັນມູນຄ່າທັງໝົດ 74.97 ຕື້ກີບ ແລະ ທຶນຊາວບ້ານປະກອບສ່ວນ 8.27 ຕື້ກີບ (11%); ສາມາດສ້າງຜົນປະໂຫຍດໃຫ້ແກ່ 26,434 ຄອບຄົວ, ປະຊາກອນ 141,017 ຄົນ ແລະ ເປັນຊົນເຜົ່າ 91,980 ຄົນ (65%). ພ້ອມທັງໄດ້ ຕິດຕາມ ແລະ ປະເມີນຄຸນນະພາບ ຂອງສິ່ງກໍ່ສ້າງພື້ນຖານໂຄງລ່າງ ທີ່ນຳໃຊ້ຮູບແບບຊາວບ້ານເປັນຜູ້ຈັດຕັ້ງປະຕິບັດເອງ ໃນບັນດາບ້ານເປົ້າໝາຍ.
- ສຳເລັດການກວດກາ ການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ ໃນແຕ່ລະບ້ານທີ່ໄດ້ຮັບກິດຈະກຳພື້ນຖານໂຄງລ່າງ ຕາມເງື່ອນໄຂ ແລະ ລະບຽບການ ທີ່ທະນາຄານໂລກ ກຳນົດໄວ້.

**ວຽກປັບປຸງຊີວິດການເປັນຢູ່**

- ສຳເລັດການຕິດຕາມຜົນຂອງການຈັດຕັ້ງປະຕິບັດວຽກງານ ຂອງ 2,019 ກຸ່ມຊ່ວຍເຫຼືອກັນ (ກຊກ) ທີ່ໄດ້ສ້າງຕັ້ງຂຶ້ນ ຢູ່ 466 ບ້ານ, ມີສະມາຊິກທັງໝົດ 25,441 ຄົນ (90% ເປັນເພດຍິງ, 77% ມາຈາກຄອບຄົວທຸກຍາກ ແລະ 62% ເປັນຊົນເຜົ່າ); ໂດຍໂຄງການ ທລຍ 3 ໄລຍະເພີ່ມທຶນ ໄດ້ສະໜອງເງິນຕົ້ນທຶນທັງໝົດ 67.47 ຕື້ກວ່າກີບ

- ສຳເລັດການເຕົ້າໂຮມຜູ້ທີ່ຜະລິດສິນຄ້າປະເພດດຽວກັນທີ່ມີຄຸນນະພາບ ເປັນຕົ້ນ ການລ້ຽງແບ້, ໝູ, ໄກ່, ເປັດ, ງົວ, ຕໍ່າຫູກ ແລະ ອື່ນໆ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດ ໂດຍໂຄງການໄດ້ສະໜັບສະໜູນສ້າງຕັ້ງກຸ່ມຜູ້ຜະລິດ ໄດ້ 50 ກຸ່ມ (ສະມາຊິກ 786 ຄົນ) ແລະ ໄດ້ສະໜອງເງິນຕົ້ນທຶນທັງໝົດ 2.3 ຕື້ກີບ.

ວຽກສົ່ງເສີມໂພຊະນາການ

- ສຳເລັດການສັງລວມ ແລະ ຕິດຕາມຜົນການຈັດຕັ້ງປະຕິບັດ ກຸ່ມໂພຊະນາການ (ກພກ) ທັງໝົດມີ 530 ກຸ່ມ ໃນ 468 ບ້ານ, ມີສະມາຊິກທັງໝົດ 37,000 ຄົນ. ທຶນທີ່ ໂຄງການ ທລຍ 3 ໄລຍະເພີ່ມທຶນ ສະໜອງໃຫ້ ແມ່ນ 4.7 ຕື້ກີບ ແລະ ຊຸມຊົນປະກອບສ່ວນ 563 ລ້ານກີບ.
- ສຳເລັດ (1) ສ້າງເຮືອນຮົ່ມປູກພືດຜັກສວນຄົວລະດູຝົນ ຈານວນ 20 ຫຼັງ ຢູ່ 12 ເມືອງ ແລະ (2) ຈັດກິດຈະກຳ ຣິດນົມແບ້ ໃນ 30 ບ້ານ ຂອງ 6 ເມືອງ, ແລະ (3) ສ້າງ 1,500 ວິດີໂອ ໃນພາສາທ້ອງຖິ່ນ ໂດຍແມ່ຍິງໃນບ້ານເອງ.

ວຽກບໍລິຫານ ແລະ ການເງິນ

- ສຳເລັດສັງລວມບົດລາຍງານການເງິນ ຈາກແຕ່ລະເມືອງ ເພື່ອສັງລວມເຂົ້າໂປແກຣມ ACCPAC.
- ສຳເລັດບົດລາຍງານການເງິນ ປະຈຳໄຕມາດ 1 (ມັງກອນ-ມີນາ 2024) ແລະ ໄຕມາດ 2 (ເມສາ-ມິຖຸນາ 2024).
- ສຳເລັດສັງລວມການໃຊ້ຈ່າຍງົບປະມານ ຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ ແຕ່ປີ 2020-2024 ມີດັ່ງນີ້:

| ວຽກງານ | ງົບປະມານທັງໝົດ (2020-2024) (USD) | ການໃຊ້ຈ່າຍສະສົມ ຮອດ 25/06/2024 (USD) | ຍອດເຫຼືອ (USD) | ເປີເຊັນຂອງການໃຊ້ຈ່າຍ (%) |
|---|---|---|---|---|
| ພັດທະນາຊຸມຊົນ ແລະ ການກໍ່ສ້າງໂຄງລ່າງພື້ນຖານ | 6,261,013 | 6,658,012 | (396,999) | 106% |
| ພັດທະນາຊຸມຊົນ ແລະ ສ້າງຄວາມເຂັ້ມແຂງ | 1,214,381 | 1,112,147 | 102,234 | 92% |
| ບໍລິຫານ ແລະ ຄຸ້ມຄອງໂຄງການ | 2,901,111 | 2,674,268 | 226,843 | 92% |
| ປັບປຸງຊີວິດການເປັນຢູ່ ແລະ ສົ່ງເສີມໂພຊະນາການ | 12,123,495 | 12,055,573 | 67,922 | 99% |
| **ລວມ** | **22,500,000** | **22,500,000** | **0** | **100%** |

**ໝາຍເຫດ**: ເປີເຊັນການໃຊ້ງົບປະມານຂອງອົງປະກອບທີ 1 ເກີນງົບປະມານ ເນື່ອງຈາກວ່າໄດ້ເພີ່ມຈຳນວນໂຄງການຍ່ອຍຊຸມຊົນຈັດຕັ້ງຈັດຕັ້ງປະຕິບັດເອງ (CFA) ຈາກ 360 ໂຄງການ ເປັນ 462 ໂຄງການ (ເພີ່ມຂຶ້ນ 102 ໂຄງການ).

ວຽກຕິດຕາມ-ປະເມີນຜົນ

- ສຳເລັດການກວດກາ ແລະ ສັງລວມບັນດາຂໍ້ມູນ ໃນລະບົບຖານຂໍ້ມູນ ກ່ຽວກັບການຈັດຕັ້ງປະຕິບັດທຸກກິດຈະກຳຂອງໂຄງການ ຕິດພັນກັບການນຳໃຊ້ງົບປະມານຕ່າງໆ.
- ສຳເລັດ (1) ສັງລວມຜົນການຈັດຕັ້ງປະຕິບັດວຽກງານ ໂຄງການ ທລຍ 3 ໄລຍະເພີ່ມທຶນ ປີ 2023 ພ້ອມອັບເດດບັນດາຕົວຊີ້ວັດທັງໝົດຂອງໂຄງການ ແລະ (2) ບົດລາຍງານສະຫຼຸບວຽກງານ ທລຍ 3 ໄລຍະເພີ່ມທຶນ ປະຈຳປີ 2023 ສະບັບພາສາອັງກິດ ແລະ ປະຈຳ 06 ເດືອນ ລວມທັງ ການອັບເດດບັນດາຕົວຊີ້ວັດທັງໝົດ ຂອງໂຄງການ ຊຶ່ງໄດ້ນຳໃຊ້ລາຍງານຜົນຕໍ່ລັດຖະບານຢ່າງເປັນທາງການ ໃນມື້ກອງປະຊຸມປິດໂຄງການ.

2023 ສະບັບພາສາອັງກິດ ແລະ ປະຈຳ 06 ເດືອນ ລວມທັງ ການອັບເດດບັນດາຕົວຊີ້ວັດທັງໝົດ ຂອງໂຄງການ ຊຶ່ງໄດ້ນຳໃຊ້ລາຍງານຜົນຕໍ່ລັດຖະບານຢ່າງເປັນທາງການ ໃນມື້ກອງປະຊຸມປິດໂຄງການ.

**ວຽກສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ**

- ສຳເລັດການ (1) ສ້າງນາຍຊ່າງຂັ້ນບ້ານ ຈຳນວນ 583 ຄົນ ເພື່ອຮັບເໝົາກໍ່ສ້າງ ແລະ ທີມງານຈັດຕັ້ງປະຕິບັດຂັ້ນບ້ານ 1,734 ຄົນ (ຍິງ 923 ຄົນ) ເພື່ອເປັນຜູ້ຕິດຕາມ ແລະ ຊຸກຍູ້ບັນດາວຽກງານກໍ່ສ້າງໂຄງການຍ່ອຍ ແລະ (2) ຊຸກຍູ້ຄະນະບໍລິຫານ ກຊກ ຂັ້ນບ້ານ ທັງໝົດ 2,695 ຄົນ ເປັນຍິງ 2,155 ຄົນ (80%) ຢູ່ 468 ບ້ານ ເພື່ອເປັນຜູ້ຄຸ້ມຄອງ ແລະ ບໍລິຫານກອງທຶນທີ່ໄດ້ສ້າງຂຶ້ນ.

### 2.2.2 ການຈັດຕັ້ງປະຕິບັດ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ

ກອງທຶນຫຼຸດຜ່ອນຄວາມທຸກຍາກ ເລີ່ມຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ຢູ່ 14 ເມືອງທຸກຍາກ ຂອງ 07 ແຂວງເປົ້າໝາຍ (ຜົ້ງສາລີ, ອຸດົມໄຊ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ ແລະ ເຊກອງ) ນັບແຕ່ປີ 2024 - 2027. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານ ໂດຍລວມ ໃນປີ 2024 ມີດັ່ງລຸມນີ້:

- ຈັດກອງປະຊຸມເປີດໂຄງການຢ່າງເປັນທາງການໃນວັນທີ 26 ມີນາ 2024.
- ກະກຽມຈັດກອງປະຊຸມສະພາບໍລິຫານໂຄງການ ປຊກ ທີ່ຈະຈັດຂຶ້ນໃນເດືອນມັງກອນ 2025, ທີ່ແຂວງສາລະວັນ.
- ສຳເລັດການບັນຈຸພະນັກງານໂຄງການ ປຊກ ຂັ້ນສູນກາງ ແລະ ຂັ້ນເມືອງ.
- ສຳເລັດການອອກແບບໂລໂກ້ຂອງໂຄງການ ປຊກ.
- ປັບປຸງ ແລະ ສ້ອມແປງ ຫ້ອງການ ໂຄງການ ປຊກ ຂັ້ນເມືອງ, ພ້ອມທັງຈັດຊື້ລົດຈັກ, ສະໜອງລົດໃຫຍ່, ຍານພາຫະນະ ແລະ ອຸປະກອນ ເພື່ອຮັບໃຊ້ໃນການຈັດຕັ້ງປະຕິບັດວຽກງານ.

ພ້ອມດຽວກັນນີ້, ຍັງໄດ້ເລີ່ມຈັດຕັ້ງປະຕິວຽກງານວິຊາສະເພາະດ້ານຕ່າງໆ ເຊິ່ງມີລາຍລະອຽດດັ່ງນີ້:

**ວຽກງານພັດທະນາເສດຖະກິດທ້ອງຖິ່ນ, ປັບປຸງໂຄງລ່າງ ແລະ ການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ**

- ສຳເລັດ ການຈັດກອງປະຊຸມເຜີຍແຜ່ແນະນຳໂຄງການ ຂັ້ນເມືອງ ທັງໝົດ 14 ເມືອງ ໃນ 07 ແຂວງເປົ້າໝາຍໂຄງການ ປຊກ. ພ້ອມນີ້, ກໍໄດ້ລົງເຜີຍແຜ່ ແນະນຳໂຄງການ ປຊກ ໃຫ້ແກ່ບັນດາບ້ານເປົ້າໝາຍຂອງໂຄງການເຊິ່ງສຸມໃສ່ບັນດາບ້ານໃນຊຸດທີ 01 ສຳເລັດ 100%.
- ສຳເລັດ ການລົງເກັບກຳຂໍ້ມູນພື້ນຖານບ້ານ ສຳລັບບ້ານຊຸດທີ 01 ຈຳນວນ 232 ບ້ານ.
- ສຳເລັດ ການເຮັດເອກະສານຄູ່ມື ສຳລັບການຈັດຕັ້ງປະຕິບັດບັນດາວຽກງານ (1) ການເຮັດແຜນພັດທະນາບ້ານ (ພາສາອັງກິດ ແລະ ພາສາລາວ), (2) ການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ແລະ ຊຸມຊົນ, (3) ການພັດທະນາພື້ນຖານໂຄງລ່າງຂະໜາດນ້ອຍ.
- ສຳເລັດ ການຈັດຝຶກອົບຮົມ ການເປັນຄູຝຶກ ກ່ຽວກັບພາວະການເປັນຜູ້ນຳຂັ້ນຮາກຖານ ເພື່ອການພັດທະນາໂດຍຊຸມຊົນເປັນເຈົ້າການ ໃຫ້ທີມງານ ປຊກ ຂັ້ນສູນກາງ, ຊຶ່ງເຮັດໜ້າທີ່ໄປຝຶກອົບຮົມໃຫ້ທີມງານ ປຊກ ຂັ້ນເມືອງ ຕາມແຜນທີ່ກຳໄວ້, ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 11 ຄົນ, ຍິງ 05 ຄົນ.
- ສຳເລັດ ການຝຶກອົບຮົມ ດ້ານການສຳຫຼວດ ແລະ ອອກແບບ ກິດຈະກຳຍ່ອຍໃຫ້ ວິຊາການປະຈຳແຕ່ລະເມືອງເປົ້າໝາຍຂອງໂຄງການ.
- ປັບປຸງ ປຶ້ມຄູ່ມືກ່ອນການຈັດຕັ້ງປະຕິບັດວຽກງານກໍ່ສ້າງພື້ນຖານໂຄງລ່າງ ເພື່ອກະກຽມຈັດພິມ ແລະ ແຈກຢາຍ ໃຫ້ບັນດາ ເມືອງ ແລະ ບ້ານ ເປົ້າໝາຍຂອງໂຄງການ ປຊກ.
- ປັບປຸງ ແລະ ພັດທະນາ ແບບຟອມສຳຫຼວດ-ອອກແບບ ແລະ ກວດກາຄຸນນະພາບກິດຈະກຳຍ່ອຍ ດ້ວຍການນຳໃຊ້ ໂປຣແກຣມ Kobo Toolbox.
- ສຳເລັດ ການສ້າງໂພສເຕີກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ກິດຈະກຳຍ່ອຍສຳລັບການວາງແຜນຂັ້ນບ້ານ.

- ສຳເລັດ ການກະກຽມບັນດາເອກະສານ ເປັນຕົ້ນແມ່ນ ຄູ່ມືການຈັດຕັ້ງປະຕິບັດໂຄງການ ປຊກ (ສະບັບພາສາອັງກິດ ແລະ ພາສາລາວ) ເພື່ອແຈກຢາຍໃຫ້ພະນັກງານຂອງໂຄງການ ປຊກ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ.

ວຽກງານສ້າງຄວາມສາມາດໃນວຽກງານປັບປຸງຊີວິດການເປັນຢູ່

- ສຳເລັດການຮ່າງບັນດາຄູ່ມືຕ່າງໆທີ່ກ່ຽວຂ້ອງກັບການສ້າງຕັ້ງກຸ່ມຊ່ວຍເຫຼືອກັນ, ການບໍລິຫານກຸ່ມ ແລະ ປັບປຸງຄູ່ມື ກ່ຽວກັບ ເຕັກນິກການສົ່ງເສີມການປູກ ແລະ ການລ້ຽງທີ່ແທດເໝາະກັບການປັບຕົວກັບການປ່ຽນແປງດິນຟ້າອາກາດ ຈຳນວນ 22 ສະບັບ.
- ສຳເລັດການຈັດຝຶກອົບຮົມ ກ່ຽວກັບ ຂັ້ນຕອນການຈັດຕັ້ງປະຕິບັດການສ້າງຄວາມສາມາດໃນວຽກງານປັບປຸງຊີວິດການເປັນຢູ່, ການສ້າງຕັ້ງກຸ່ມ, ການບໍລິຫານກຸ່ມ ແລະ ເຕັກນິກການປູກ ແລະ ການລ້ຽງ ໃຫ້ແກ່ບັນດາພະນັກງານປັບປຸງຊີວິດການເປັນຢູ່ຂັ້ນທ້ອງຖິ່ນ ທັງໝົດ 14 ເມືອງ, ໂດຍມີຜູ້ເຂົ້າຮ່ວມທັງໝົດ 92 ຄົນ, ຍິງ 21 ຄົນ. ພ້ອມດຽວກັນນີ້, ຍັງໄດ້ລົງຊຸກຍູ້-ຕິດຕາມ ແລະ ໃຫ້ຄຳແນະນຳເພີ່ມຕື່ມ ກ່ຽວກັບ ການສ້າງຕັ້ງກຸ່ມຊ່ວຍເຫຼືອກັນ (ກຊກ) ແລະ ການຄັດເລືອກຄະນະບໍລິຫານກຸ່ມຊ່ວຍເຫຼືອກັນ (ຄບກ) ຢູ່ໃນບ້ານເປົ້າໝາຍຂອງໂຄງການ ເພື່ອຮັບປະກັນວ່າ ການສ້າງຕັ້ງກຸ່ມສອດຄ່ອງຕາມຫຼັກການ ແລະ ລະບຽບຂອງໂຄງການ.
- ສຳເລັດ ການສ້າງຕັ້ງກຸ່ມ ກຊກ ໄດ້ 854 ກຸ່ມ, ມີສະມາຊິກທັງໝົດ 11,872 ຄົນ, ເປັນຍິງ 10,563 ຄົນ (89% ຂອງສະມາຊິກທັງໝົດ) ເຊິ່ງໃນນັ້ນມີຢ່າງໜ້ອຍມີ 01 ກຸ່ມ/ບ້ານ ແລະ ສູງສຸດ 04 ກຸ່ມ/ບ້ານ.
- ສຳເລັດ ການສ້າງຕັ້ງ ຄບກ ໄດ້ທັງໝົດ 232 ບ້ານ, ທຽບເທົ່າ 100% ຂອງແຜນການ (01 ຄບກ/ບ້ານ), ເຊິ່ງໃນນັ້ນມີສະມາຊິກ ຄບກ ທັງໝົດ 1,995 ຄົນ, ເປັນຍິງ 1,392 ຄົນ (70%).
- ສຳເລັດການສ້າງຕັ້ງຜູ້ອຳນວຍຄວາມສະດວກຂັ້ນບ້ານໄດ້ 232 ບ້ານ, ທຽບເທົ່າ 100% ຂອງແຜນການ, ເຊິ່ງມີຜູ້ອຳນວຍຄວາມສະດວກຂັ້ນບ້ານທັງໝົດ 232 ຄົນເປັນຍິງ 56 ຄົນ (24%).
- ສຳເລັດ ການເປີດບັນຊີ ຄບກ ໄດ້ທັງໝົດ 232 ບັນຊີ, ທຽບເທົ່າ 100% ຂອງແຜນການ, ເຊິ່ງໃນນັ້ນມີສະມາຊິກ ຄບກ ທີ່ມີສິດໃນການເບີກ-ຖອນເງິນ ໃນບັນຊີສຳລັບຈັດຕັ້ງປະຕິບັດກິດຈະກຳທັງໝົດ 696 ຄົນ, ເປັນຍິງ 358 ຄົນ (51% ຂອງ ຄບກ ທີ່ເປີດບັນຊີທະນາຄານ).

ວຽກງານສົ່ງເສີມການເຂົ້າເຖິງໂພຊະນາການຂອງຊຸມຊົນ

- ສຳເລັດ ການສ້າງຄູ່ມືໂພຊະນາການ ແລະ ການປ່ຽນແປງພຶດຕິກຳ. ພ້ອມທັງ ສຳເລັດ ການຈັດຝຶກອົບຮົມຄວາມຮູ້ດ້ານໂພຊະນາການ ແລະ ການປ່ຽນແປງພຶດຕິກຳໃຫ້ກັບທີມງານພະນັກງານຂັ້ນເມືອງ ເຊັ່ນ: ປະສານງານເມືອງ, ຫົວໜ້າທີມ, ວິຊາການໂພຊະນາການ, ວິຊາການສາທາລະນະສຸກ, ກະສິກຳ ແລະ ພະນັກງານໂພຊະນາການຂັ້ນບ້ານ, ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 107 ທ່ານ, ຍິງ 56 ທ່ານ.
- ສຳເລັດການຈັດຈ້າງທີ່ປຶກສາທາງນອກ ມາຈັດຝຶກອົບຮົມ ເຊັ່ນ: ທີ່ປຶກສາການແປຮູບ ແລະ ປຸງແຕ່ງ, ສະມາຄົມເຄືອຂ່າຍກະສິກອນລາວ ແລະ ຟາມຄວາຍນາຊາວ ແຂວງຫຼວງພະບາງ.
- ສຳເລັດການສ້າງຕັ້ງກຸ່ມໂພຊະນາການ ໄດ້ທັງໝົດ 323 ກຸ່ມ ໃນ 232 ບ້ານ (1-2 ກຸ່ມ ໃນ 1 ບ້ານ).
- ສຳເລັດການສ້າງຕັ້ງຄະນະຄຸ້ມຄອງກຸ່ມໂພຊະນາການ ໄດ້ທັງໝົດ 232 ບ້ານ, ທຽບເທົ່າ 100% ຂອງແຜນການ.

ວຽກງານບໍລິຫານ ແລະ ການເງິນ

- ໄດ້ສຳເລັດການສ້າງຄູ່ມື ບໍລິຫານ-ການເງິນ ເພື່ອນຳໃຊ້ພາຍໃນໂຄງການ ປຊກ.
- ໄດ້ຮັບການຄ່ຽນເງິນໂຄງການ ງວດທຳອິດ ຈາກທະນາຄານໂລກ ຈຳນວນ 5,000,000 ໂດລາສະຫະລັດ ເຂົ້າໃນບັນຊີຂອງ DA ທີ່ຄຸ້ມຄອງໂດຍຄັງເງິນແຫ່ງຊາດ ເພື່ອຈັດຕັ້ງປະຕິບັດກິດຈະກຳໂຄງການ. ມາຮອດປະຈຸບັນໄດ້ນຳໃຊ້ງົບປະມານແລ້ວ ຈຳນວນ 30% ຂອງງົບປະມານດັ່ງກ່າວ.

- ສໍາເລັດ ການເປີດບັນຊີທະນາຄານຂັ້ນເມືອງ ທັງໝົດ 14 ເມືອງ ເພື່ອຮອງຮັບການນໍາໃຊ້ງົບປະມານເຂົ້າໃນການຈັດຕັ້ງປະຕິບັດກິດຈະກໍາໂຄງການຢູ່ທ້ອງຖິ່ນ.
- ສໍາເລັດການປັບປຸງລະບົບໂປຣແກຣມບັນຊີ (ACPACC).
- ສໍາເລັດການຮ່າງແຜນຈັດຊື້-ຈັດຈ້າງ ຂອງໂຄງການ ປຊກ ແລະ ໄດ້ຮັບການອະນຸມັດຈາກຜູ້ໃຫ້ທຶນກູ້ຢືມ (ທະນາຄານໂລກ) ເພື່ອຈັດຕັ້ງປະຕິບັດ ຕາມແຕ່ລະໄລຍະ.
- ໄດ້ສໍາເລັດການຝຶກອົບຮົມດ້ານວຽກງານບໍລິຫານ-ການເງິນ ໃຫ້ແກ່ພະນັກງານການເງິນ ຂອງໂຄງການ ຂັ້ນເມືອງ ທັງໝົດ 14 ເມືອງ.
- ສັງລວມການໃຊ້ຈ່າຍງົບປະມານ ແຕ່ເລີ່ມໂຄງການ ຈົນຮອດວັນທີ 31 ທັນວາ 2024 ມີລາຍລະອຽດດັ່ງນີ້:

| ອົງປະກອບ | ງົບປະມານທັງໝົດ (2023-2027) (USD) | ການໃຊ້ຈ່າຍສະສົມ ຮອດ 31/12/2024 (USD) | ຍອດເຫຼືອ (USD) | ການໃຊ້ຈ່າຍ (%) |
|---|---|---|---|---|
| **ອົງປະກອບ 1:** ກິດຈະກໍາຍ່ອຍ ເພື່ອການພັດທະນາເສດຖະກິດ, ປັບປຸງໂຄງລ່າງ ແລະ ສ້າງຄວາມເຂັ້ມແຂງທ້ອງຖິ່ນ | 27,603,625 | 584,326 | 27,019,299 | 2 |
| **ອົງປະກອບ 2:** ການສ້າງຄວາມອາສາມາດໃນວຽກງານປັງປຸງຊີວິດການເປັນຢູ່ | 7,938,340 | 178,465 | 7,759,874 | 2 |
| **ອົງປະກອບ 3:** ການສົ່ງເສີມການເຂົ້າເຖິງໂພຊະນາການຂອງຊຸມຊົນ | 4,736,401 | 346,125 | 4,390,276 | 7 |
| **ອົງປະກອບ 4:** ວຽກງານຄຸ້ມຄອງບໍລິ ຫານ, ການສ້າງຄວາມເຂັ້ມແຂງ, ຕິດຕາມ ແລະ ປະເມີນຜົນ | 4,721,634 | 831,237 | 3,890,397 | 18 |
| **ອົງປະກອບ 5:** ນະໂຍບາຍການແກ້ໄຂໄພພິບັດສຸກເສີນ | - | - | - | - |
| **ລວມ** | **45,000,000** | **1,940,153** | **43,059,846** | **4** |

ວຽກງານຕິດຕາມ ແລະ ປະເມີນຜົນ

- ປັບປຸງ ຮ່າງ (1) ຄູ່ມື ແລະ (2) ແບບຟອມ ສໍາລັບວຽກງານຕິດຕາມ ແລະ ປະເມີນຜົນ ໂຄງການ ປຊກ ເພື່ອໃຫ້ແທດເໝາະກັບການຈັດຕັ້ງປະຕິບັດບັນດາກິດຈະກໍາ ຂອງໂຄງການ ປຊກ.
- ອອກແບບຖານຂໍ້ມູນ MIS ເພື່ອສ້າງລະບົບຖານຂໍ້ມູນຂອງໂຄງການ ປຊກ ເຊັ່ນ: ອອກແບບສອບຖາມ ກ່ຽວກັບ ຄວາມຕ້ອງການຂອງແຕ່ລະຂະແໜງ ໃນລະບົບຖານຂໍ້ມູນ ໂຄງການ ປຊກ ເພື່ອເປັນບ່ອນອີງໃນການສ້າງລະບົບຖານຂໍ້ມູນ ໃຫ້ສອດຄ່ອງກັບຄວາມຕ້ອງການ.
- ທົບທວນ ແລະ ສັງລວມ ຂໍ້ມູນພື້ນຖານບ້ານ (Village Profile) ຢູ່ບັນດາບ້ານເປົ້າໝາຍ ຂອງໂຄງການ ປຊກ ທັງ 14 ເມືອງເປົ້າໝາຍ ເພື່ອສ້າງເປັນຖານຂໍ້ມູນເບື້ອງຕົ້ນສໍາລັບການວາງແຜນບັນດາກິດຈະກໍາ ຂອງໂຄງການ.
- ປະສານກັບໂຄງການທີ່ນອນໃນແຜນງານໜຶ່ງດຽວທີ່ມີຫຼາຍຂະແໜງການເຂົ້າຮ່ວມເພື່ອແກ້ໄຂບັນຫາດ້ານໂພຊະນາການ (Nutrition Convergence Program) ກ່ຽວກັບ ຕົວຊີ້ວັດທີ່ກ່ຽວພັນກັນ ແລະ ວິທີການຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດບັນດາກິດຈະກໍາ ຂອງໂຄງການ.

- ສະໜັບສະໜູນການສ້າງຟອມຕ່າງໆ ຜ່ານໂປຣແກຣມ "Kobo Toolbox" ໃຫ້ແກ່ບັນດາຂະແໜງການຂອງໂຄງການ ປຊກ ຂັ້ນສູນກາງ ເປັນຕົ້ນ ວຽກງານສ້າງຄວາມເຂັ້ມແຂງຊຸມຊົນ, ວຽກງານປັບປຸງຊີວິດການເປັນຢູ່, ວຽກງານໂພຊະນາການ, ວຽກງານວິສະວະກອນ ແລະ ວຽກງານສິ່ງແວດລ້ອມ-ສັງຄົມ.
- ຕິດຕາມ ແລະ ສັງລວມ ການຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆ ຂອງບັນດາຂະແໜງການ ທີ່ຂຶ້ນກັບໂຄງການ ປຊກ.

**ວຽກງານສິ່ງເວດລ້ອມ ແລະ ສັງຄົມ**

- ສຳເລັດການຮ່າງ (1) ເອກະສານກົນໄກການແກ້ໄຂ ຄາຣ້ອງຟ້ອງ (GRM) ແລະ (2) ລະບຽບການເດີນທາງທີ່ປອດໄພ.
- ສຳເລັດການສ້າງຄູ່ມື ປົກປ້ອງສິ່ງແວດລ້ອມ-ສັງຄົມ ສະບັບພາສາລາວ ໂດຍອີງໃສ່ ກອບວຽກສິ່ງແວດລ້ອມ - ສັງຄົມ ເຫລັ້ມ 1 ແລະ ເອກະສານຊ້ອນທ້າຍເຫລັ້ມ 2.
- ສຳເລັດການຈັດຝຶກອົບຮົມ ການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESF) ໃຫ້ແກ່ທີມງານ ປຊກ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງຢູ່ທ້ອງຖິ່ນ ທັງໝົດ 14 ເມືອງ, ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 70 ຄົນ ເປັນຍິງ 8 ຄົນ.
- ສຳເລັດ ແຜນວຽກສິ່ງແວດລ້ອມ ແລະ ສັງຄົມ ຮອດປີ 2027 ເພື່ອຈັດຕັ້ງປະຕິບັດຢູ່ໃນພື້ນທີ່ເປົ້າໝາຍຂອງໂຄງການ.

**ວຽກງານບົດບາດຍິງ-ຊາຍ (ສົ່ງເສີມຄວາມກ້າວໜ້າແມ່ຍິງ) ແລະ ສັງຄົມ**

- ສຳເລັດການສ້າງແຜນ ສົ່ງເສີມ ຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມສັງຄົມ (GESI) ຂອງໂຄງການ ປຊກ.
- ສຳເລັດການປະສານງານ ກັບສະຫະພັນແມ່ຍິງລາວ ໃນການສະໜອງຄູຝຶກ ກ່ຽວກັບ ພາວະການເປັນຜູ້ນຳຂັ້ນຮາກຖານ.

**ວຽກການເຂົ້າຮ່ວມກອງປະຊຸມຕ່າງໆ**

- ເຂົ້າຮ່ວມກອງປະຊຸມປຶກສາຫາລື ແລະ ປະກອບຄຳເຫັນດ້ານວິຊາການ, ຈຳນວນ 15 ຄັ້ງ.
- ເຂົ້າຮ່ວມກອງປະຊຸມສ່ອງແສງອ້ອມຂ້າງກະຊວງ ກປ, ຈຳນວນ 01 ຄັ້ງ.
- ເຂົ້າຮ່ວມຮັບຟັງປະຖະກະຖາ ແລະ ເຜີຍແຜ່ເຊື່ອມຊຶມ ບັນດາເອກະສານຂອງພັກ-ລັດ, ຈຳນວນ 03 ຄັ້ງ.
- ເຂົ້າຮ່ວມກອງປະຊຸມ ຂອງພັກ ແລະ ອົງການຈັດຕັ້ງມະຫາຊົນ ອ້ອມຂ້າງກະຊວງ ກປ, ຈຳນວນ 02 ຄັ້ງ.
- ເຂົ້າຮ່ວມການຈັດງານພິທີການຕ່າງໆ ຈຳນວນ 05 ຄັ້ງ.
- ເຂົ້າຮ່ວມຝຶກອົບຮົມຕ່າງໆ, ຈຳນວນ 03 ຄັ້ງ.

### 2.3 ການຮ່ວມມື ແລະ ປະສານງານ

- ໄດ້ປະສານສົມທົບ ແລະ ຮ່ວມມື ກັບກົມທີ່ກ່ຽວຂ້ອງ, ພ້ອມທັງລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານໃຫ້ການນຳກະຊວງ ຮັບຊາບເປັນປົກກະຕິ. ນອກຈາກນັ້ນ, ຢູ່ຂັ້ນທ້ອງຖິ່ນ ກໍຍັງໄດ້ປະສານສົມທົບ ແລະ ລາຍງານໃຫ້ແກ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ແລະ ການນຳຂັ້ນແຂວງ ທີ່ໂຄງການ ທລຍ ແລະ ໂຄງການ ປຊກ ຈັດຕັ້ງປະຕິບັດຢູ່.
- ໄດ້ປະສານສົມທົບກັບ ບັນດາໂຄງການພາຍໃຕ້ແຜນງານໜຶ່ງດຽວທີ່ມີສ່ວນຮ່ວມຫຼາຍຂະແໜງການ ເພື່ອປັບປຸງວຽກງານໂພຊະນາການຢູ່ 4 ແຂວງພາກເໜືອ ແລະ 3 ແຂວງພາກໃຕ້ ຂອງ ສປປ ລາວ ຢ່າງເປັນປົກກະຕິ ເພື່ອລາຍງານຄວາມຄືບໜ້າ, ແລກປ່ຽນບົດຮຽນ ແລະ ຖອດຖອນບົດຮຽນຕ່າງໆ, ຊຶ່ງຜ່ານມາ ກໍໄດ້ເຂົ້າຮ່ວມກອງປະຊຸມຕາມແຕ່ລະໄລຍະ.
- ເປັນໃຈກາງປະສານສົມທົບ ແລະ ເຮັດວຽກຮ່ວມກັບທະນາຄານນະໂຍບາຍ, ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ແລະ ກົມພັດທະນາຊົນນະບົດ ໃນການທົດລອງຈັດຕັ້ງປະຕິບັດວຽກງານສະໜອງສິນເຊື່ອ 4 ຮ່ວມ ເພື່ອ

ແກ້ໄຂຄວາມທຸກຍາກ ໃຫ້ສະມາຊິກກຸ່ມຜະລິດ ຢູ່ເຂດເປົ້າໝາຍຂອງໂຄງການ ທລຍ ຢູ່ແຂວງອຸດົມໄຊ ທີ່ໄດ້ສ້າງ 14 ກຸ່ມຜູ້ຜະລິດ ປະກອບມີ 4 ກຸ່ມ ຫັດຖະກຳຕໍ່າແຜນ ແລະ 10 ກຸ່ມລ້ຽງສັດ.

- ໄດ້ປະສານສົມທົບກັບບັນດາຜູ້ໃຫ້ທຶນ ເພື່ອປຶກສາຫາລື, ທົບທວນວຽກງານ ແລະ ຕິລາຄາຜົນໄດ້ຮັບຕ່າງໆ ເປັນປົກກະຕິ.

## 3. ສັງເກດຕິລາຄາ ດ້ານຄົງຄ້າງ ແລະ ບົດຮຽນຖອດຖອນໄດ້

### 3.1. ດ້ານຄົງຄ້າງ

- ບາງບ້ານເປົ້າໝາຍ ຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ ແລະ ໂຄງການ ປຊກ ຍັງບໍ່ມີໄຟຟ້າ ແລະ ບໍ່ມີສັນຍານໂທລະສັບ ເຮັດໃຫ້ຫຍຸ້ງຍາກໃນການຈັດບາງກິດຈະກຳຂອງໂຄງການ ເປັນຕົ້ນ ກິດຈະກຳ ດ້ານໂພຊະນາການ.
- ການຫຼຸດຄ່າຂອງເງິນກີບ ແລະ ສະພາບເງິນເຟີ້ ເຮັດໃຫ້ມີຜົນກະທົບໂດຍກົງຕໍ່ກັບການຈັດຕັ້ງປະຕິບັດວຽກງານ ໂດຍສະເພາະຄ່າວັດສະດຸການກໍ່ສ້າງ ໄດ້ເພີ່ມຂຶ້ນ ເຮັດໃຫ້ການກໍ່ສ້າງບາງໂຄງການ ບໍ່ສຳເລັດຕາມແຜນການທີ່ກຳນົດໄວ້ ແລະ ຕົ້ນທຶນການຜະລິດກະສິກຳ ທີ່ເພີ່ມຂຶ້ນ ເຮັດໃຫ້ສະມາຊິກ ກຸ່ມຊ່ວຍເຫຼືອກັນ ແລະ ກຸ່ມຜະລິດ ຈຳນວນໜຶ່ງ ບໍ່ກ້າກູ້ຢືມເງິນ ເພື່ອລົງທຶນໃສ່ການຜະລິດ ເພາະຢ້ານຂາດທຶນ ແລະ ບໍ່ສາມາດສົ່ງເງິນຄືນໄດ້.
- ໃນໄລຍະກະກຽມໂຄງການ ປຊກ ແມ່ນໄດ້ ຄວບຄູ່ ກັບການຈັດຕັ້ງປະຕິບັດ ບາງກິດຈະກຳຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ ໄລຍະທ້າຍ,ຈຶ່ງສົ່ງຜົນໃຫ້ບາງກິດຈະກຳ ເກີດຄວາມລ່າຊ້າ ເປັນຕົ້ນ ການຈັດກອງປະຊຸມເຜີຍແຜ່ໂຄງການ ຢູ່ຂັ້ນເມືອງ-ຂັ້ນບ້ານ, ການລົງເກັບກຳຂໍ້ມູນພື້ນຖານບ້ານ, ການສ້າງຕັ້ງກຸ່ມຕ່າງໆ, ແລະ ການວາງແຜນພັດທະນາບ້ານ.
- ເພື່ອຮັບປະກັນການຈັດຕັ້ງປະຕິບັດບັນດາກິດຈະກຳຂອງໂຄງການ ປຊກ ໄປໃນທິດທາງດຽວກັນ ແລະ ມີປະສິດທິພາບ ຈຶ່ງຈຳເປັນຕ້ອງໄດ້ສ້າງຄວາມເຂັ້ມແຂງໃຫ້ ບັນດາພະນັກງານຂອງໂຄງການ ປຊກ ໃນທຸກຂັ້ນ, ພ້ອມທັງ ຕ້ອງຈັດຝຶກອົບຮົມໃຫ້ ຊາວຊົນນະບົດ ໃນບ້ານເປົ້າໝາຍທຸກບ້ານ.
- ເນື່ອງຈາກໃນແຕ່ລະບ້ານເປົ້າໝາຍ ມີ 01 ຫຼື ຫຼາຍກວ່າ 02 ຊົນເຜົ່າ, ຈຶ່ງເຮັດໃຫ້ການສື່ສານ ອາດມີຫຼາຍກວ່າ 01 ພາສາ. ສະນັ້ນ, ການສື່ສານ ຈຶ່ງເປັນສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດບັນດາກິດຈະກຳ.
- ຄວາມເປັນເອກະພາບຂອງບັນດາໂຄງການພາຍໃຕ້ແຜນງານໜຶ່ງດຽວທີ່ມີຫຼາຍໂຄງການຈັດຕັ້ງປະຕິບັດ ຍັງເປັນວຽກງານທີ່ຕ້ອງໄດ້ຮັບການປັບປຸງ ເປັນຕົ້ນ ການປະສານງານບາງກິດຈະກຳ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດຂອງແຕ່ລະໂຄງການ ເປັນໄປໃນທິດທາງດຽວກັນ ເພື່ອຊ່ວຍໃຫ້ເກີດຜົນປະໂຫຍດສູງສຸດ ຕໍ່ກັບປະຊາຊົນລາວບັນດາເຜົ່າ.

### 3.2. ບົດຮຽນຖອດຖອນໄດ້

- ການຈັດຕັ້ງປະຕິບັດວຽກງານ ເມື່ອເບິ່ງໃສ່ກັບຄວາມຮຽກຮ້ອງຕ້ອງການຂອງທ້ອງຖິ່ນ ໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າແລ້ວ ເຫັນວ່າ ຍັງມີຫຼາຍໜ້າວຽກທີ່ຕ້ອງໄດ້ສືບຕໍ່ຂົນຂວາຍການສະໜັບສະໜູນທາງດ້ານທຶນຮອນ ທັງພາຍໃນ ແລະ ຕ່າງປະເທດ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານແກ້ໄຂຄວາມທຸກຍາກ ຕາມເຂດພັດທະນາຊົນນະບົດໃໝ່ ໃນພື້ນທີ່ຊົນນະບົດຫ່າງໄກສອກຫຼີກ ໃຫ້ກວ້າງຂວາງກວ່າເກົ່າ, ສະນັ້ນ, ຈຶ່ງຈຳເປັນຕ້ອງໄດ້ເລັ່ງສືບຕໍ່ ຮ່າງແຜນລະດົມທຶນ ໃຫ້ສຳເລັດ.
- ການປະສານງານ ຂອງບັນດາໂຄງການທີ່ນອນໃນແຜນງານໜຶ່ງດຽວທີ່ມີສ່ວນຮ່ວມຫຼາຍຂະແໜງການ ເພື່ອແກ້ໄຂບັນຫາດ້ານໂພຊະນາການ ແມ່ນມີຄວາມສຳຄັນ ແລະ ຕ້ອງສ້າງຄວາມເຂົ້າໃຈຂອງປະຊາຊົນ ທີ່ເຂົ້າຮ່ວມເພື່ອຫຼີກລ່ຽງການສົມທຽບການເຂົ້າຮ່ວມກິດຈະກຳຂອງໂຄງການ.
- ການນຳໃຊ້ຮູບແບບຊຸມຊົນເປັນຜູ້ຈັດຕັ້ງປະຕິບັດເອງ ໂດຍການໂອນງົບປະມານໂດຍກົງໃຫ້ຊາວບ້ານຈັດຕັ້ງປະຕິບັດກິດຈະກຳ ຍັງພົບຄວາມຫຍຸ້ງຍາກ ເພາະບໍ່ເປັນໄປຕາມລະບຽບການຂອງກະຊວງການເງິນ. ດັ່ງນັ້ນ, ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງໄດ້ອອກຂໍ້ຕົກລົງວ່າດ້ວຍການອະນຸມັດໃຫ້ ກອງທຶນຫຼຸດຜ່ອນຄວາມທຸກຍາກ ຈັດຕັ້ງປະຕິບັດໂຄງການຕາມຮູບແບບຊຸມຊົນປະຕິບັດເອງ ເພື່ອສົ່ງເຖິງກະຊວງການເງິນ.

- ການສ້າງຄວາມເປັນເຈົ້າ ແລະ ມອບຄວາມຮັບຜິດຊອບ ໃຫ້ແກ່ຊຸມຊົນ ແລະ ຂະແໜງການກ່ຽວຂ້ອງຂັ້ນເມືອງ ຈະຊ່ວຍໃຫ້ເກີດມີຄວາມຍືນຍົງ.
- ການພັດທະນາທີ່ອີງໃສ່ທ່າແຮງຂອງທ້ອງຖິ່ນ ແລະ ຄົນຂອງທ້ອງຖິ່ນ ຖືວ່າໄດ້ຮັບຜົນດີ ແລະ ຮັບປະກັນຄວາມຍືນຍົງຂອງກິດຈະກຳ.
- ການຈັດຕັ້ງປະຕິບັດ ທີ່ມີ ລະບຽບຫຼັກການ, ຄູ່ມື, ຄຳແນະນຳ ແລະ ການກຳນົດຕົວຊີ້ວັດຜົນໄດ້ຮັບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແມ່ນເປັນເຄື່ອງມືສຳຄັນໃຫ້ແກ່ຂະບວນການຈັດຕັ້ງປະຕິບັດວຽກງານໂຄງການ ປຊກ ສາມາດບັນລຸຄາດໝາຍສູ້ຊົນຂອງໂຄງການ, ພ້ອມທັງຮັບປະກັນຄວາມໂປ່ງໃສ ແລະ ຄວາມຍືນຍົງຂອງໂຄງການ.

## ພາກທີ II
## ທິດທາງແຜນການ ປີ 2025

### 1. ທິດທາງ ແລະ ຄາດໝາຍລວມ

#### 1.1 ທິດທາງລວມ

ທິດທາງການຈັດຕັ້ງປະຕິບັດວຽກງານ ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ແມ່ນສືບຕໍ່ການຈັດຕັ້ງປະຕິບັດໂຄງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງລັດຖະບານ ໃນຂອບເຂດທົ່ວປະເທດ, ໂດຍສະເພາະຕາມແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂອງລັດຖະບານ.

#### 1.2 ຄາດໝາຍລວມ

ສຸມໃສ່ຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ໃຫ້ສຳເລັດຕາມແຜນການທີ່ກຳນົດໄວ້. ພ້ອມກັນນັ້ນ, ກໍຈະກະກຽມສ້າງແຜນດຳເນີນງານຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ເພື່ອສືບຕໍ່ລະດົມທຶນຮອນ ມາປະກອບສ່ວນໃນການຫຼຸດຜ່ອນຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າ ໃນເຂດຫ່າງໄກສອກຫຼີກ.

### 2. ທິດທາງວຽກງານແຕ່ລະດ້ານ

#### 2.1 ແຜນວຽກບໍລິມະສິດ

- ປັບປຸງ ຮ່າງ ແຜນລະດົມທຶນສຳລັບວຽກງານແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ໃນເຂດຫ່າງໄກສອກຫຼີກ ຂອງ ສປປ ລາວ ສຳລັບປີ 2026-2035 ເພື່ອໃຫ້ສາມາດຮັບຮອງໂດຍກະຊວງກະສິກຳ ແລະ ປ່າໄມ້.
- ສືບຕໍ່ຈັດຕັ້ງປະຕິບັດ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ຢູ່ 14 ເມືອງທຸກຍາກ ຂອງ 07 ແຂວງເປົ້າໝາຍ.

#### 2.2 ແຜນວຽກວິຊາສະເພາະ

ວຽກງານຂອງໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ທີ່ຈະຈັດຕັ້ງປະຕິບັດ ໃນປີ 2025 ປະກອບດ້ວຍ:

**2.2.1 ວຽກງານພັດທະນາເສດຖະກິດທ້ອງຖິ່ນ, ປັບປຸງໂຄງລ່າງ ແລະ ການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ**

- ສືບຕໍ່ ໃຫ້ສຳເລັດ TOR ແລະ ແຜນສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ.
- ສືບຕໍ່ ໃຫ້ສຳເລັດ ຮ່າງ ຟອມ ສຳລັບການຕິດຕາມວຽກງານສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ.
- ຮ່າງແຜນພັດທະນາບ້ານ (VDP) ໃຫ້ສຳເລັດ ທັງໝົດ 232 ບ້ານ ຂອງບ້ານຊຸດທີ 01 ແລະ ແຜນດັ່ງກ່າວ ໄດ້ຮັບຮອງຈາກອຳນາດການປົກຄອງຂັ້ນເມືອງ.
- ຄາດຄະເນການວາງແຜນ ສຳຫຼວດ-ອອກແບບ ແລະ ຈັດຕັ້ງປະຕິບັດ ກິດຈະກຳພື້ນຖານໂຄງລ່າງຂະໜາດນ້ອຍ ໃຫ້ໄດ້ຈຳນວນ 232 ກິດຈະກຳ, ທຽບເທົ່າເປັນ 100% ຂອງ ຈຳນວນ 232 ບ້ານ.

- ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນໂດຍສະເພາະທີມງານຈັດຕັ້ງປະຕິບັດບ້ານ (VIT) ໃຫ້ໄດ້ຈຳນວນ 1,392 ຄົນ ໃນທັງໝົດ 232 ບ້ານ (ຢ່າງໜ້ອຍ 06 ຄົນ/ບ້ານ).
- ຂຶ້ນແຜນສ້າງຄວາມເຂັ້ມແຂງ ແລະ ສ້າງອາຊີບ ໃຫ້ແກ່ຊຸມຊົນໃນພື້ນທີ່ເປົ້າໝາຍໂຄງການ ໃນ ໜຶ່ງບ້ານ ປະມານ 01-02 ຄົນ ໃນໄລຍະທີ 01 ຂອງໂຄງການ ເຊິ່ງຄາດຄະເນສາມາດສ້າງໄດ້ 464 ຄົນ.
- ຈັດຝຶກອົບຮົມ ການເປັນຄູຝຶກ ກ່ຽວກັບ ພາວະການເປັນຜູ້ນຳຂັ້ນຮາກຖານ ເພື່ອການພັດທະນາໂດຍຊຸມຊົນເປັນເຈົ້າການ ໃຫ້ພະນັກງານໂຄງການ ປຊກ ຂັ້ນເມືອງ ແລະ ພາກສ່ວນກ່ຽວຂ້ອງໃນ 14 ເມືອງ ຂອງ 07 ແຂວງເປົ້າໝາຍຂອງໂຄງການ, ເປົ້າໝາຍຜູ້ເຂົ້າຮ່ວມ ໃຫ້ໄດ້ 173 ຄົນ, ຍິງ 70 ຄົນ.
- ຊຸກຍູ້ ການຝຶກອົບຮົມ ກ່ຽວກັບ ພາວະການເປັນຜູ້ນຳຂັ້ນຮາກຖານ ໃຫ້ບັນດາຜູ້ນຳ/ການນຳ ຂັ້ນຮາກຖານບ້ານຂອງ 232 ບ້ານເປົ້າໝາຍ (ບ້ານຊຸດທີ 01) ຂອງໂຄງການ, ໂດຍສະເພາະ ບ້ານປະເພດທີ 01 ຈຳນວນ 134 ບ້ານຂອງ 14 ເມືອງ. ຄາດໝາຍຜູ້ເຂົ້າຮ່ວມທັງໝົດ 2,948 ຄົນ, ຍິງ 1,340 ຄົນ.
- ຈັດຝຶກອົບຮົມ ກ່ຽວກັບ ທັກສະການເປັນຜູ້ອຳນວຍຄວາມສະດວກ ໃຫ້ຜູ້ອຳນວຍຄວາມສະດວກຂອງບ້ານ ໃນບັນດາບ້ານເປົ້າໝາຍ ຂອງໂຄງການ ຊຸດທີ 01 ຂອງ 14 ເມືອງ.

**2.2.2 ວຽກງານສ້າງຄວາມສາມາດໃນວຽກງານປັບປຸງຊີວິດການເປັນຢູ່**

- ສືບຕໍ່ລົງຊຸກຍູ້-ຕິດຕາມ, ແຈກຢາຍບັນດາຄູ່ມື ແລະ ອຸປະກອນຮັບໃຊ້ຕ່າງໆ ພ້ອມທັງໃຫ້ຄຳແນະນາເພີ່ມຕື່ມກ່ຽວກັບ ການປະຊຸມກຸ່ມ ໃຫ້ແກ່ກຸ່ມຊ່ວຍເຫຼືອກັນ ຢູ່ 14 ເມືອງເປົ້າໝາຍ.
- ກະກຽມການຈັດຝຶກອົບຮົມ ກ່ຽວກັບ ກິດຈະກຳການສ້າງລາຍຮັບ, ການຄຸ້ມຄອງ ແລະ ບໍລິຫານກຸ່ມຊ່ວຍເຫຼືອກັນ, ການບັນທຶກບັນຊີ ແລະ ບໍລິຫານການເງິນຂອງກຸ່ມ, ແລະ ແຜນທຸລະກິດຄົວເຮືອນ ໃຫ້ແກ່ທີມງານປັບປຸງຊີວິດການເປັນຢູ່ຂັ້ນເມືອງ ແລະ ຂັ້ນບ້ານ.
- ຈັດຝຶກອົບຮົມດ້ານເຕັກນິກວິຊາການ ການປູກຝັງ, ການລ້ຽງສັດ ໃຫ້ແກ່ສະມາຊິກ ກຊກ ຈຳນວນ 232 ບ້ານ, ເປົ້າໝາຍຜູ້ເຂົ້າຮ່ວມ 11,872 ຄົນ, ຍິງ 10,563 (89%).
- ລົງໃຫ້ຄຳແນະນຳ ແລະ ນຳພາ ການສ້າງແຜນທຸລະກິດຄົວເຮືອນ ເພື່ອຍື່ນຂໍກູ້ຢືມເງິນຕົ້ນທຶນ ຈາກໂຄງການ ແລະ ສະໜອງເງິນຕົ້ນທຶນ ໃຫ້ສະມາຊິກ ກຊກ ໃຫ້ໄດ້ 854 ກຸ່ມ, 11,872 ຄອບຄົວ, ລວມເປັນມູນຄ່າ 33,264,000,000ກີບ ຫຼື 1,584,000ໂດລາສະຫະລັດ (ອັດຕາແລກປ່ຽນ 21,000 ກີບ/ໂດລາສະຫະລັດ).
- ປະເມີນຜົນການຈັດຕັ້ງປະຕິບັດກິດຈະກຳຂອງກຸ່ມຊ່ວຍເຫຼືອກັນຂອງບ້ານຊຸດທີ 01 ທີ່ໄດ້ຮັບທຶນຈາກໂຄງການ.
- ໃຫ້ຄຳແນະນຳທີມງານຂັ້ນເມືອງເພື່ອອຳນວຍຄວາມສະດວກໃນການສ້າງຕັ້ງກຸ່ມຜະລິດ (1 ກຸ່ມ/ເມືອງ).
- ຝຶກອົບຮົມຄືນ ແລະ ຖອດຖອນບົດຮຽນໃຫ້ແກ່ທີມງານ ປັບປຸງຊີວິດການເປັນຢູ່ຂັ້ນທ້ອງຖິ່ນ ກ່ຽວກັບ ການສ້າງ ຕັ້ງກຸ່ມຊ່ວຍເຫຼືອກັນ ຊຸດທີ 01 ແລະ ວາງແຜນການສ້າງຕັ້ງກຸ່ມຊ່ວຍເຫຼືອກັນຢູ່ບ້ານຊຸດທີ 02. ພ້ອມທັງໃຫ້ຄຳແນະນຳ ແລະ ນຳພາ ການສ້າງຕັ້ງກຸ່ມ ຢູ່ບ້ານຊຸດທີ 02 ຢູ່ 14 ເມືອງເປົ້າໝາຍຂອງໂຄງການ.

**2.2.3 ວຽກງານສົ່ງເສີມການເຂົ້າເຖິງໂພຊະນາການຂອງຊຸມຊົນ**

- ຈັດກອງປະຊຸມກຸ່ມໂພຊະນາການຊຸມຊົນ ພ້ອມທັງເຮັດສາທິດການແປຮູບ ແລະ ການປຸງແຕ່ງອາຫານ ໃຫ້ເດັກນ້ອຍ, ແມ່ຍິງຖືພາ ແລະ ແມ່ຍິງລ້ຽງລູກ (1,000 ວັນ) ໃຫ້ໄດ້ຈຳນວນ 24 ຄັ້ງ, ເປົ້າໝາຍຜູ້ເຂົ້າຮ່ວມ ຈຳນວນ 3,480 ຄົນ, ພ້ອມທັງສະໜັບສະໜູນເງິນທຶນ ໃນການປຸງແຕ່ງອາຫານ ເປັນມູນຄ່າຈຳນວນ 34,800,000 ກີບ.
- ສ້າງ ສວນຄົວໂພຊະນາການ ໃຫ້ໄດ້ 696 ສວນ ແລະ 696 ຄອບຄົວ, ພ້ອມທັງ ສ້າງວິດີໂອດ້ານໂພຊະນາການໃຫ້ໄດ້ 470 ຫົວຂໍ້, ແລະ ເຜີຍແຜ່ວິດີໂອ ໃຫ້ສະມາຊິກກຸ່ມ ທັງໝົດ 470 ຄັ້ງ.
- ລົງຢ້ຽມຢາມ ສະມາຊິກຄອບຄົວກຸ່ມໂພຊະນາການ ຈຳນວນ 464 ຄັ້ງ, ພາຍໃນ 232 ບ້ານ.
- ຊຸກຍູ້ກຸ່ມໂພຊະນາການຊຸມຊົນ ໃຫ້ສາມາດຜະລິດຜົງອາຫານ ເຊັ່ນ: ຜົງເຂົ້າຈ້າວ, ເຂົ້າໜຽວ, ຜົງປາ, ຜົງຜັກໃບຂຽວ ແລະ ຜົງຖົ່ວ ໃຫ້ໄດ້ຈຳນວນ 4,860 ກິໂລ.
- ສ້າງເຮືອນຮົ່ມ ຂອງກຸ່ມໂພຊະນາການຊຸມຊົນ ໃຫ້ໄດ້ 30 ຫຼັງ.

- ຈັດກອງປະຊຸມ ບ້ານເປົ້າໝາຍຂອງແຜນງານໜຶ່ງດຽວຫຼາຍຂະແໜງການຮ່ວມກັນ ດ້ານໂພຊະນາການ ຈຳນວນ 02 ຄັ້ງ/ປີ ເພື່ອນຳສະເໜີຜົນການຈັດຕັ້ງປະຕິບັດກິດຈະກຳດ້ານໂພຊະນາການ ແລະ ນຳສະເໜີ ກ່ຽວກັບບັດໃຫ້ຄະ ແນນເດັກນ້ອຍ.

**2.2.4 ວຽກງານບໍລິຫານ ແລະ ການເງິນ**

- ສືບຕໍ່ ສະໜອງ ບັນດາ ອຸປະກອນ, ເຄື່ອງໃຊ້ຫ້ອງການ ແລະ ເຟີນີເຈີ (ໂຕະ, ຕັ່ງ) ໃຫ້ແກ່ຫ້ອງການໂຄງການ ປຊກ ທັງໝົດ 14 ເມືອງ ໃຫ້ສຳເລັດຕາມແຜນການ.
- ສືບຕໍ່ ດຳເນີນການກໍ່ສ້າງ ແລະ ສ້ອມແປງ ຫ້ອງນ້ຳ ຂອງໂຄງການ ໃຫ້ແທດເໝາະຕາມສະພາບປະຈຸບັນ ຕາມການແນະນຳ ຂອງທະນາຄານໂລກ.
- ສືບຕໍ່ ຕິດຕາມ ແລະ ທົບທວນ ການຂຶ້ນແຜນງົບປະມານ ສຳລັບການຈັດກິດຈະກຳຕ່າງໆ ຂອງແຕ່ລະວຽກງານ ເພື່ອໃຫ້ສອດຄ່ອງກັບງົບປະມານທີ່ມີຢູ່.
- ກະກຽມການຄ່ຽນເງິນງວດທີ 02 ໃນມູນຄ່າ 5,625,000 ໂດລາສະຫະລັດ.
- ວາງແຜນນຳໃຊ້ງົບປະມານ 2025 ໂດຍແບ່ງອອກເປັນແຕ່ລະໄຕມາດ.
- ກະກຽມ ການຝຶກອົບຮົມທົບທວນຄືນ ວຽກງານບໍລິຫານ-ການເງິນ.

**2.2.5 ວຽກງານຕິດຕາມ ແລະ ປະເມີນຜົນ**

- ສືບຕໍ່ ສ້າງຖານຂໍ້ມູນ MIS ເພື່ອສ້າງເປັນລະບົບຖານຂໍ້ມູນຂອງໂຄງການ ປຊກ.
- ສືບຕໍ່ ປະສານກັບໂຄງການແຜນງານໜຶ່ງດຽວທີ່ມີຫຼາຍຂະແໜງການເຂົ້າຮ່ວມ (Nutrition Convergence) ກ່ຽວກັບຕົວຊີ້ວັດທີ່ກ່ຽວພັນກັນ ແລະ ວິທີການຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດບັນດາກິດຈະກຳ ຂອງໂຄງການ.
- ສືບຕໍ່ ສະໜັບສະໜູນການສ້າງຟອມຕ່າງໆ ຜ່ານໂປຣແກຣມ “Kobo Toolbox” ໃຫ້ແກ່ບັນດາຂະແໜງການຂອງໂຄງການ ປຊກ ຂັ້ນສູນກາງ ເປັນຕົ້ນ ວຽກງານສ້າງຄວາມເຂັ້ມແຂງຊຸມຊົນ, ວຽກງານປັບປຸງຊີວິດການເປັນຢູ່, ວຽກງານວິສະວະກຳ ແລະ ວຽກງານສິ່ງແວດລ້ອມ-ສັງຄົມ.
- ຈັດຝຶກອົບຮົມ ກ່ຽວກັບວຽກງານຕິດຕາມ ແລະ ປະເມີນຜົນ ໃຫ້ແກ່ພະນັກງານຕິດຕາມ ແລະ ປະເມີນຜົນ.
- ສືບຕໍ່ ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆຂອງບັນດາວຽກງານຂອງໂຄງການ.

**2.2.6 ວຽກງານສິ່ງເວດລ້ອມ ແລະ ສັງຄົມ**

- ສືບຕໍ່ ໃຫ້ສຳເລັດ (1) ກົດລະບຽບການນຳໃຊ້ຖະໜົນໃຫ້ມີຄວາມປອດໄພ ແລະ (2) ເອກະສານກົນໄກແກ້ໄຂຄຳເຫັນ ແລະ ຄຳຮ້ອງຟ້ອງ (GRM).
- ເຜີຍແຜ່ ແລະ ປະຕິບັດ ນະໂຍບາຍການແກ້ໄຂໄພພິບັດສຸກເສີນ (CERC).
- ລົງສຳຫລວດພື້ນທີ່ ຂອງບັນດາກິດຈະກຳທີ່ຈະຈັດຕັ້ງປະຕິບັດ ເພື່ອຈະປະເມີນຄວາມສ່ຽງ ແລະ ສ້າງແຜນຫຼຸດຜ່ອນຜົນກະທົບ ໃຫ້ສຳເລັດ 232 ບ້ານ ຂອງບ້ານຊຸດທີ 01.
- ກະກຽມ ເອກະສານ ກັ່ນກອງ ແລະ ປະເມີນ ຄວາມສ່ຽງ ດ້ານສິ່ງແວດລ້ອມ ແລະ ສັງຄົມ ພ້ອມທັງສ້າງບົດລາຍງານການກັ່ນຕອງ ສຳລັບບັນດາກິດຈະກຳ ໂຄງລ່າງພື້ນຖານຂະໜາດນ້ອຍ ຂອງບ້ານເປົ້າໝາຍຊຸດທີ 01.
- ເຜີຍແຜ່ຂໍ້ມູນ ແລະ ວິທີການປົກປ້ອງສິ່ງແວດລ້ອມ-ສັງຄົມ ໃຫ້ແກ່ຜູ້ຈັດຕັ້ງປະຕິບັດ ກິດຈະກຳ ຂັ້ນບ້ານ ໃຫ້ສຳເລັດ 232 ບ້ານ ຂອງບ້ານຊຸດທີ 01.

**2.2.7 ວຽກງານບົດບາດຍິງ-ຊາຍ (ສົ່ງເສີມຄວາມກ້າວໜ້າແມ່ຍິງ) ແລະ ສັງຄົມ**

- ຕິດຕາມ ການຈັດຕັ້ງປະຕິບັດ ບັນດາກິດຈະກຳ ຂອງໂຄງການ ປຊກ ທີ່ຕິດພັນກັບວຽກງານບົດບາດຍິງ-ຊາຍ (ສົ່ງເສີມຄວາມກ້າວໜ້າແມ່ຍິງ) ແລະ ສັງຄົມ.
- ຊຸກຍູ້ໃຫ້ແມ່ຍິງເຂົ້າຮ່ວມໃນບັນດາກິດຈະກຳຂອງໂຄງການໂດຍວາງຄາດໝາຍໃຫ້ໄດ້ 50% ຂອງຜູ້ເຂົ້າຮ່ວມທັງໝົດ.

**3. ມາດຕະການຈັດຕັ້ງປະຕິບັດ**

(1) ສືບຕໍ່ປະສານສົມທົບ, ຮ່ວມມື ກັບກົມທີ່ກ່ຽວຂ້ອງ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂອງ ທລຍ ໃຫ້ການນຳກະຊວງກະສິກຳ ແລະ ປ່າໄມ້ ຮັບຊາບ. ນອກຈາກນັ້ນ, ຢູ່ຂັ້ນທ້ອງຖິ່ນ ກໍ່ຍັງຈະປະສານສົມທົບ ແລະ ລາຍງານ ໃຫ້ແກ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ແລະ ການນຳ ຂັ້ນແຂວງ ທີ່ໂຄງການ ທລຍ ຈັດຕັ້ງປະຕິບັດຢູ່;

(2) ສືບຕໍ່ປະສານສົມທົບກັບບັນດາຜູ້ໃຫ້ທຶນ ເພື່ອປຶກສາຫາລື, ທົບທວນວຽກງານ ແລະ ຕີລາຄາຜົນໄດ້ຮັບຕ່າງໆ ພ້ອມທັງຂົນຂວາຍລະດົມທຶນ ເພື່ອປະກອບສ່ວນເຂົ້າໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢູ່ ສປປ ລາວ.

**ຜູ້ອຳນວຍການ**

ພັດນະ**ຄອນ ຄັນທະມີໄຊ**

<u>ບ່ອນນຳສົ່ງ:</u>

1. ທ່ານ ຣລມຕ ຜູ້ຊີ້ນຳ — 01 ສະບັບ (ເພື່ອລາຍງານ)
2. ພ/ນ ຄົ້ນຄວ້າ ແລະ ສັງລວມ, ຫ້ອງການກະຊວງ — 01 ສະບັບ (ເພື່ອສັງລວມ)
3. ເກັບຮັກສາໄວ້ — 01 ສະບັບ